ສຳນັກງານ ຄຄຊ
ເລກທີ 202
ວັນທີ 23.FEB.2015
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

-----===~~~~~~===-----

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ທະນາຄານແຫ່ງ ສ.ປ.ປ ລາວ
ເລກທີ: 765
ວັນທີ: 19.02.2015
ໂທລະສັບ: 243710

ເລກທີ: 0173 /ຄພນ.ອຈພ

ນະຄອນຫຼວງວຽງຈັນ, ວັນທີ: 18 Feb 2015

ຮຽນ: - ທ່ານລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.

- ບັນດາທ່ານລັດຖະມົນຕີຊ່ວຍວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.

ເລື່ອງ: ລາຍງານສະພາບການເໜັງຕີງ ຂອງລາຄາສິນຄ້າຕົ້ນຕໍໃນທ້ອງຕະຫຼາດ ປະຈຳເດືອນມັງກອນ (01) ປີ 2015.

- ອີງຕາມການຕິດຕາມ ແລະ ການລາຍງານຂອງບັນດາພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ສັງເກດເຫັນວ່າໃນເດືອນມັງກອນ (01) ປີ 2015 ລາຄາສິນຄ້າມີການເໜັງຕີງ ດັ່ງມີລາຍລະອຽດລຸ່ມນີ້:

## 1. ໝວດສະບຽງອາຫານ.

❖ ລາຄາເຂົ້າເປືອກໜຽວ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 2,882 ກີບ/ກິໂລ ທຽບກັບເດືອນຜ່ານມາຫລຸດລົງ 0.71%, ເນື່ອງຈາກລາຄາເຂົ້າເປືອກໜຽວຢູ່ແຂວງຈຳປາສັກ ຫລຸດລົງ 600 ກີບ/ກິໂລ; ສ່ວນລາຄາເຂົ້າເປືອກໜຽວຢູ່ແຂວງບໍ່ແກ້ວ ພັດເພີ່ມຂຶ້ນ 250 ກີບຕໍ່ກິໂລ. ການປ່ຽນແປງຂອງລາຄາໃນເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 0.99%.

❖ ລາຄາເຂົ້າເປືອກຈ້າວ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 3,141 ກີບ/ກິໂລ ທຽບກັບເດືອນຜ່ານມາແມ່ນຫລຸດລົງ 0.56%, ເນື່ອງຈາກລາຄາເຂົ້າເປືອກໜຽວຢູ່ແຂວງຈຳປາສັກ ຫລຸດລົງ 300 ກີບ/ກິໂລ; ການປ່ຽນແປງຂອງລາຄາເດືອນນີ້ທຽບກັບໄລຍະດຽວກັນຂອງປີຜ່ານມາ ຫລຸດລົງ 1.69%.

ສາເຫດທີ່ພາໃຫ້ລາຄາເຂົ້າເປືອກໜຽວ ແລະ ເຂົ້າເປືອກຈ້າວ ຫລຸດລົງ ຍ້ອນວ່າຊາວກະສິກອນ ແລະ ພໍ່ແມ່ປະຊາຊົນຂອງແຂວງດັ່ງກ່າວ ໄດ້ນຳເອົາເຂົ້າອອກມາຈຳໜ່າຍສູ່ທ້ອງຕະຫຼາດຫຼາຍຂຶ້ນ ເຮັດປະລິມານເຂົ້າມີຫຼາຍ ແລະ ພຽງພໍກັບຄວາມຕ້ອງການຊົມໃຊ້ຢູ່ພາຍໃນແຂວງ.

ໃນນັ້ນ: - ລາຄາເຂົ້າເປືອກໜຽວ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 2,300 - 3,500 ກີບ/ກິໂລ, (ສະຫວັນນະເຂດ, ຈຳປາສັກ - ຊຽງຂວາງ, ຫົວພັນ ແລະ ໄຊຍະບູລີ)

- ລາຄາເຂົ້າເປືອກຈ້າວ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 2,200 - 4,500 ກີບ/ກິໂລ, (ແຂວງບໍ່ແກ້ວ ແລະ ຊຽງຂວາງ).

❖ ລາຄາເຂົ້າສານໜຽວ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 6,815 ກີບ/ກິໂລ ທຽບກັບເດືອນທີ່ຜ່ານມາແມ່ນຢູ່ໃນລະດັບປົກກະຕິ ທັງເຂົ້າສານໜຽວທີ 1 ແລະ ທີ 2; ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2.29%.

❖ ລາຄາເຂົ້າສານຈ້າວ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 7,768 ກີບ/ກິໂລ ທຽບກັບເດືອນທີ່ຜ່ານມາແມ່ນຢູ່ໃນລະດັບປົກກະຕິ ທັງເຂົ້າສານຈ້າວທີ 1 ແລະ ທີ 2; ການປ່ຽນແປງຂອງລາຄາ ເດືອນນີ້ທຽບກັບໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 1.65%.

ໃນນັ້ນ: - ລາຄາເຂົ້າສານໜຽວໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 4,500 - 9,000 ກີບ/ກິໂລ.

- ລາຄາເຂົ້າສານຈ້າວ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 5,000 - 15,000 ກີບ/ກິໂລ (ເຂົ້າຈ້າວມະລິໄທ).

❖ ລາຄາຊີ້ນງົວ ແລະ ຊີ້ນຄວາຍ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 65,441 ກີບ/ກິໂລ ທຽບກັບເດືອນຜ່ານມາແມ່ນເພີ່ມຂຶ້ນ 0.45% ເນື່ອງຈາກລາຄາຊີ້ນງົວ ແລະ ຊີ້ນຄວາຍ ຢູ່ແຂວງອຸດົມໄຊ ເພີ່ມຂຶ້ນ 5,000 ກີບ/ກິໂລ, ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10.18%. ສາເຫດທີ່ພາໃຫ້ລາຄາຊີ້ນຢູ່ແຂວງດັ່ງກ່າວເພີ່ມຂຶ້ນ ຍ້ອນວ່າການສະໜອງສັດຢູ່ພາຍໃນແມ່ນຫລຸດລົງ, ການເກັບຊື້ສັດພົບກັບຄວາມຫຍຸ້ງຍາກ ແລະ ບໍ່ສາມາດສະໜອງໄດ້ທັນກັບເວລາ ເຮັດໃຫ້ລາຄາມີການເໜັງຕີງເພີ່ມຂຶ້ນ.

ໃນນັ້ນ: - ລາຄາຊີ້ນງົວ ແລະ ຊີ້ນຄວາຍ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 50,000 - 73,750 ກີບ/ກິໂລ.

❖ ລາຄາຊີ້ນໝູ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 39.559 ກີບ/ກິໂລ ທຽບໃສ່ເດືອນຜ່ານມາແມ່ນເພີ່ມຂຶ້ນ 0.64% ເນື່ອງຈາກລາຄາຊີ້ນໝູຢູ່ແຂວງຫົວພັນ ເພີ່ມຂຶ້ນ 5.000 ກີບ/ກິໂລ; ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9.89%. ສາເຫດທີ່ພາໃຫ້ລາຄາຊີ້ນໝູ ເພີ່ມຂຶ້ນ ຍ້ອນວ່າການລ້ຽງ ແລະ ການສະໜອງສັດຢູ່ພາຍໃນຈຳກັດ, ບໍ່ພຽງພໍກັບຄວາມຕ້ອງການ ແລະ ຕ້ອງໄດ້ນຳເຂົ້າຈາກແຂວງໃກ້ຄຽງ ຈຶ່ງເຮັດ ໃຫ້ລາຄາຕົ້ນທຶນການຜະລິດແມ່ນເພີ່ມຂຶ້ນ.

ໃນນັ້ນ: - ລາຄາຊີ້ນໝູ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 30,000 - 45,000 ກີບ/ກິໂລ.

❖ ລາຄາໄກ່ລາດຄົວແລ້ວ, ໄກ່ພັນຄົວແລ້ວ ແລະ ເປັດຄົວແລ້ວ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 33,574-46,309 ກີບ/ກິໂລ ທຽບໃສ່ເດືອນຜ່ານມາລາຄາໄກ່ລາດຄົວແລ້ວ, ໄກ່ພັນຄົວແລ້ວ ແລະ ເປັດຄົວແລ້ວ ແມ່ນຢູ່ໃນລະດັບທີ່ປົກກະຕິ; ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາ: ລາຄາໄກ່ລາດຄົວແລ້ວເພີ່ມຂຶ້ນ 2.88%, ໄກ່ພັນຄົວແລ້ວ ເພີ່ມຂຶ້ນ 1.75% ແລະ ເປັດຄົວແລ້ວ ຫລຸດລົງ 2.57%.

ໃນນັ້ນ: - ລາຄາໄກ່ລາດຄົວແລ້ວ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 31,250 - 65,000 ກີບ/ກິໂລ.
- ລາຄາໄກ່ພັນຄົວແລ້ວ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 23,333 - 55,000 ກີບ/ກິໂລ.
- ລາຄາເປັດຄົວແລ້ວ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 29,167 - 65,000 ກີບ/ກິໂລ.

❖ ລາຄາປາຄໍ່, ປາດຸກພັນ ແລະ ປານິນ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 19,926-45,383 ກີບ/ກິໂລ ທຽບໃສ່ເດືອນຜ່ານມາລາຄາປາຄໍ່ ແມ່ນຫລຸດລົງ 1.45%, ສ່ວນລາຄາປາດຸກພັນ ແລະ ປານິນ ແມ່ນຢູ່ໃນລະດັບ ທີ່ເປັນປົກກະຕິ, ສາເຫດທີ່ລາຄາປາຄໍ່ຫລຸດລົງຍ້ອນວ່າ ການສະໜອງປາໃນຕະຫຼາດແມ່ນມີຫຼາຍ. ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະ ດຽວກັນຂອງປີຜ່ານມາ ລາຄາປາຄໍ່ເພີ່ມຂຶ້ນ 8.24%, ປາດຸກພັນເພີ່ມຂຶ້ນ 4.15% ແລະ ປານິນເພີ່ມຂຶ້ນ 4.64%.

ໃນນັ້ນ: - ລາຄາປາຄໍ່ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 25,000 - 75,000 ກີບ/ກິໂລ.
- ລາຄາປາດຸກພັນ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 16,000 - 35,000 ກີບ/ກິໂລ.
- ລາຄາປານິນ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 22,000 - 35,000 ກີບ/ກິໂລ.

❖ ລາຄາໝາກເຜັດແຫ້ງ, ໝາກເຜັດສົດ, ຫົວຜັກບົ່ວແຫ້ງ ແລະ ຫົວຜັກທຽມແຫ້ງ ສະເລ່ຍໃນທົ່ວປະເທດເດືອນມັງກອນ 2015 = 12,221-27,456 ກີບ/ກິໂລ ທຽບໃສ່ເດືອນຜ່ານມາລາຄາໝາກເຜັດແຫ້ງ ແລະ ຫົວຜັກທຽມແຫ້ງແມ່ນຢູ່ໃນລະດັບປົກກະຕິ, ສ່ວນລາຄາໝາກເຜັດສົດ ຫລຸດລົງ 3.57% ແລະ ຫົວຜັກບົ່ວແຫ້ງ ຫລຸດລົງ 8.78%, ເນື່ອງຈາກວ່າລາຄາຂອງໝາກເຜັດສົດ ແລະ ຫົວຜັກບົ່ວແຫ້ງ ຢູ່ແຂວງຊຽງຂວາງ ຫລຸດລົງ 10.000-20.000 ກີບ/ກິໂລ. ສາເຫດທີ່ເຮັດໃຫ້ສິນຄ້າປະເພດດັ່ງກ່າວ ຫລຸດລົງ ຍ້ອນວ່າການຜະລິດຂອງພໍ່ແມ່ປະຊາຊົນໃນໄລຍະນີ້ມີຫຼາຍ, ພຽງພໍກັບຄວາມຕ້ອງການພາຍໃນ ແລະ ຍັງສາມາດສະໜອງໃຫ້ກັບແຂວງໃກ້ຄຽງຕື່ມອີກ. ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາ ລາຄາໝາກເຜັດແຫ້ງຫລຸດລົງ 10.15%, ໝາກເຜັດສົດຫລຸດລົງ 29.76%, ຫົວຜັກບົ່ວແຫ້ງຫລຸດລົງ 6.29% ແລະ ຫົວຜັກທຽມແຫ້ງຫລຸດລົງ 3.82%.

ໃນນັ້ນ: - ລາຄາໝາກເຜັດແຫ້ງ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 20,000 - 43,750 ກີບ/ກິໂລ.
- ລາຄາໝາກເຜັດສົດ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 10,000 - 27,000 ກີບ/ກິໂລ.
- ລາຄາຫົວຜັກບົ່ວແຫ້ງ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 8,000 - 20,000 ກີບ/ກິໂລ.
- ລາຄາຫົວຜັກທຽມແຫ້ງ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 9,000 - 18,000 ກີບ/ກິໂລ.

2. ໝວດເຄື່ອງກໍ່ສ້າງ.

❖ ລາຄາຊີມັງລາວປະສົມ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 748,148-807,500 ກີບ/ໂຕນ ທຽບໃສ່ເດືອນຜ່ານມາແມ່ນຢູ່ໃນລະດັບປົກກະຕິ (ລາຄາຊີມັງລາວປອດແລນ ສະເລ່ຍໃນທົ່ວປະເທດ = 796,667 - 800,000 ກີບ/ໂຕນ), ການປ່ຽນແປງຂອງລາຄາເດືອນນີ້ທຽບກັບໄລຍະດຽວກັນຂອງປີຜ່ານມາຫລຸດລົງ 0.57-5.97%.

ໃນນັ້ນ; - ລາຄາຊີມັງລາວ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 660,000 - 950,000 ກີບ/ໂຕນ.

- ລາຄາຊີມັງໄທ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 660,000 - 1,000,000 ກີບ/ໂຕນ.
- ລາຄາຊີມັງຫວຽດນາມ ໃນທົ່ວປະເທດ ຕໍ່າສຸດ-ສູງສຸດ = 740,000 - 850,000 ກີບ/ໂຕນ.

❖ ລາຄາເຫຼັກເສັ້ນລາວ, ເຫຼັກເສັ້ນຫວຽດນາມ ແລະ ເຫຼັກເສັ້ນໄທ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 5,533,612-7,795,000 ກີບ/ໂຕນ ທຽບໃສ່ເດືອນຜ່ານມາລາຄາເຫຼັກເສັ້ນຂອງແຕ່ລະປະເທດ ທີ່ຈຳໜ່າຍຢູ່ພາຍໃນ, ແມ່ນຢູ່ໃນລະດັບປົກກະຕິ. ການປ່ຽນແປງຂອງລາຄາເດືອນນີ້ທຽບກັບໄລຍະດຽວກັນຂອງປີຜ່ານມາ ລາຄາເຫຼັກ ເສັ້ນລາວ ຫລຸດລົງ 2.29%, ເຫຼັກເສັ້ນຫວຽດນາມ ຫລຸດລົງ 2.29% ແລະ ເຫຼັກເສັ້ນໄທ ຫລຸດລົງ 0.29%.

ໃນນັ້ນ; - ລາຄາເຫຼັກເສັ້ນລາວປະເພດ 1 ທົ່ວປະເທດ ຕໍ່າສຸດ-ສູງສຸດ = 6,200,000 - 9,720,000 ກີບ/ໂຕນ.

- ລາຄາເຫຼັກເສັ້ນລາວປະເພດ 2 ທົ່ວປະເທດ ຕໍ່າສຸດ-ສູງສຸດ = 2,700,000 - 7,504,000 ກີບ/ໂຕນ.
- ລາຄາເຫຼັກເສັ້ນຫວຽດນາມ ທົ່ວປະເທດ ຕໍ່າສຸດ-ສູງສຸດ = 3,150,000 - 8,500,000 ກີບ/ໂຕນ.
- ລາຄາເຫຼັກເສັ້ນໄທ ທົ່ວປະເທດ ຕໍ່າສຸດ-ສູງສຸດ = 4,032,000 - 9,720,000 ກີບ/ໂຕນ.

3. ຝຸ່ນວິທະຍາສາດ

❖ ລາຄາຝຸ່ນວິທະຍາສາດ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 247.588-266,125 ກີບ/ຖົງ ທຽບໃສ່ເດືອນຜ່ານມາແມ່ນຢູ່ໃນລະດັບປົກກະຕິ, ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 0.14-1.65%.

ໃນນັ້ນ; - ລາຄາຝຸ່ນວິທະຍາສາດ ທົ່ວປະເທດ ຕໍ່າສຸດ-ສູງສຸດ = 150,000 - 361,667 ກີບ/ຖົງ.

4. ໝວດທົ່ວອາຫານສັດລ້ຽງ.

❖ ລາຄາທົ່ວອາຫານໄກ່ລາວ ແລະ ລາຄາທົ່ວອາຫານໄກ່ໄທ ສະເລ່ຍໃນທົ່ວປະເທດ ເດືອນມັງກອນ 2015 = 132,708-185,857 ກີບ/ຖົງ ທຽບໃສ່ເດືອນຜ່ານມາລາຄາທົ່ວອາຫານໄກ່ລາວ ແລະ ທົ່ວອາຫານໄກ່ໄທ ແມ່ນຢູ່ໃນລະດັບປົກກະຕິ. ການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານມາ ລາຄາທົ່ວອາຫານໄກ່ລາວ ເພີ່ມຂຶ້ນ 1.75% ແລະ ລາຄາທົ່ວອາຫານໄກ່ໄທ ຫລຸດລົງ 0.68%.

ໃນນັ້ນ; - ລາຄາທົ່ວອາຫານໄກ່ລາວ ທົ່ວປະເທດ ຕໍ່າສຸດ-ສູງສຸດ = 90,000 - 210,000 ກີບ/ຖົງ;

- ລາຄາທົ່ວອາຫານໄກ່ໄທ ທົ່ວປະເທດ ຕໍ່າສຸດ-ສູງສຸດ = 120,000 - 264,000 ກີບ/ຖົງ;

5. ໝວດນໍ້າມັນເຊື້ອໄຟ.

❖ ໃນເດືອນມັງກອນນີ້, ລາຄານໍ້າມັນເຊື້ອໄຟໃນຂອບເຂດທົ່ວປະເທດໄດ້ປັບລົງ 03 ຄັ້ງ ຕາມແຈ້ງການຂອງກະຊວງອຸດສາຫະກຳ ແລະ ການຄ້າ ດັ່ງນີ້: ແຈ້ງການສະບັບເລກທີ 0022/ອຄ.ຄພນ, ລົງວັນທີ 08 ມັງກອນ 2015, ແຈ້ງການສະບັບເລກທີ 0074/ອຄ.ຄພນ, ລົງວັນທີ 19 ມັງກອນ 2015 ແລະ ແຈ້ງການສະບັບເລກທີ 0138/ອຄ.ຄພນ, ລົງວັນທີ 28 ມັງກອນ 2015. ລາຄາສະເລ່ຍໃນທົ່ວປະເທດ ນໍ້າມັນແອັດຊັງພິເສດ 9,860 ກີບ/ລິດ, ນໍ້າມັນແອັດຊັງທຳມະດາ 8,789 ກີບ/ລິດ ແລະ ນໍ້າມັນກາຊວນ 7,769 ກີບ/ ລິດ; ທຽບໃສ່ເດືອນຜ່ານມາລາຄານໍ້າມັນແອັດຊັງພິເສດ ຫລຸດລົງ 6.81%, ນໍ້າມັນແອັດຊັງທຳມະດາ ຫລຸດລົງ 6.98% ແລະ ນໍ້າມັນກາຊວນ ຫລຸດລົງ 8.13%; ສ່ວນອັດຕາການປ່ຽນແປງຂອງລາຄາເດືອນນີ້ ທຽບກັບໄລຍະດຽວກັນຂອງປີຜ່ານ ມານໍ້າມັນແອັດຊັງພິເສດ ຫລຸດລົງ 12.74%, ນໍ້າມັນແອັດຊັງທຳມະດາ ຫລຸດລົງ 13.33%, ນໍ້າມັນກາຊວນ ຫລຸດລົງ 16.49%. ສ່ວນລາຄາຂາຍຍ່ອຍນໍ້າມັນເຊື້ອໄຟ ຢູ່ຈຸດນະຄອນຫຼວງ

ວຽງຈັນໃນເດືອນ, ນ້ຳມັນແອັດຊັງພິເສດ 9,820 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ 8,580 ກີບ/ລິດ ແລະ ນ້ຳມັນກາຊວນ 7,560 ກີບ/ລິດ.

6. ຄາດຄະເນລາຄາສິນຄ້າໃນເດືອນຕໍ່ໄປ:

❖ ໃນເດືອນຕໍ່ໄປ (ເດືອນກຸມພາ) ປີ 2015 ຄາດວ່າ: ລາຄາສິນຄ້າປະເພດໝວດສະບຽງອາຫານ ເປັນຕົ້ນແມ່ນເຂົ້າກິນ ແມ່ນຈະມີທ່າອ່ຽງໝັ້ນຄົງຢູ່ໃນລະດັບປົກກະຕິຢູ່ໃນຫຼາຍທ້ອງຖິ່ນ, ເພາະໃນໄລຍະນີ້ ເຫັນວ່າເຂົ້າຍັງມີຈຳນວນຫຼາຍ ແລະ ພຽງພໍກັບຄວາມຕ້ອງການຊົມໃຊ້, ໂດຍສະເພາະແມ່ນເຂດທີ່ມີການຜະລິດເຂົ້າໄດ້ຫຼາຍ.

❖ ສຳລັບລາຄາສິນຄ້າປະເພດຊີ້ນງົວ, ຊີ້ນຄວາຍ ແລະ ຊີ້ນໝູຄາດວ່າຈະມີທ່າອ່ຽງຢູ່ໃນລະດັບປົກກະຕິ, ເພາະວ່າໃນໄລຍະ ຫຼາຍເດືອນຜ່ານມາເຫັນວ່າລາຄາບໍ່ໝັ້ນຄົງ ຫຼື ອາດຈະໝັ້ນເພີ່ມຂຶ້ນ-ຫລຸດລົງເລັກໜ້ອຍ ຢູ່ໃນຊ່ວງງານບຸນປະເພນີຊາດຫວຽດນາມ ແລະ ຊາວຈີນທີ່ຈະມາເຖິງນີ້, ແຕ່ກໍຄົງຈະບໍ່ຮ້າຍແຮງເທົ່າໃດ ເພາະພາກລັດຂະແໜງການກ່ຽວຂ້ອງຢູ່ແຕ່ລະຂັ້ນ ກໍໄດ້ເອົາໃຈໃສ່ຕິດຕາມ ແລະ ຊີ້ນຳຢ່າງໃກ້ຊິດ, ຖ້າວ່າລາຄາມີການໝັ້ນຄົງເພີ່ມຂຶ້ນນັ້ນ ອາດຈະເປັນຍ້ອນສະພາບການສະໜອງສັດມີ ຈຳກັດ, ການເກັບຊື້ພົບຄວາມຫຍຸ້ງຍາກ ເຮັດໃຫ້ການສະໜອງບໍ່ພຽງພໍ ແລະ ບໍ່ທັນກັບຄວາມຕ້ອງການຂອງຕະຫຼາດ ໃນບາງໄລຍະ;

❖ ລາຄາສິນຄ້າປະເພດພືດຜັກຊະນິດຕ່າງໆ ກໍຈະມີທ່າອ່ຽງຫລຸດລົງ ຍ້ອນວ່າການຜະລິດພືດຜັກໃນໄລຍະນີ້ ແມ່ນໄດ້ຮັບຜົນດີ ແລະ ສ່ວນຫຼາຍຈະເປັນປະເພດພືດຜັກ ທີ່ສາມາດຜະລິດໄດ້ພາຍໃນ;

❖ ລາຄາສິນຄ້າປະເພດເຄື່ອງກໍ່ສ້າງເປັນຕົ້ນເຫຼັກເສັ້ນ ແລະ ຊີມັງຈະມີທ່າອ່ຽງຢູ່ໃນລະດັບປົກກະຕິ ແລະ ອາດຈະໝັ້ນ ຄົງຂຶ້ນ-ລົງເລັກໜ້ອຍໃນບາງໄລຍະ ຢູ່ໃນບາງເຂດ, ຍ້ອນການສະໜອງສິນຄ້າບາງລາຍການອາດຈະບໍ່ທັນເວລາ ແລະ ຈະເຮັດໃຫ້ລາຄາມີການໝັ້ນຄົງ.

**ໝາຍເຫດ:** ໄດ້ຄັດຕິດເສັ້ນສະແດງ ການໝັ້ນຄົງຂອງລາຄາສິນຄ້າໃນທ້ອງຕະຫຼາດປະຈຳເດືອນ ໃນບາງລາຍການສິນຄ້າຕັ້ງແຕ່ຕົ້ນປີ 2013 ຈົນຮອດປະຈຸບັນມາພ້ອມນີ້.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຫົວໜ້າກົມການຄ້າພາຍໃນ

ກົມການຄ້າພາຍໃນ

**ທະໜອມ ແກ້ວໄຊຍະຈັກ**

ບ່ອນສົ່ງເອກະສານ:
1. ທ່ານລັດຖະມົນຕີວ່າການ ແລະ ບັນດາທ່ານລັດຖະມົນຕີຊ່ວຍວ່າການທ່ານລະ 1 ສະບັບ.
2. ບັນດາຫ້ອງການ, ສະຖາບັນ ແລະ ບັນດາກົມອ້ອມຂ້າງກະຊວງ ອຄ ບ່ອນລະ 1 ສະບັບ.
3. ກອງເລຂາກະຊວງ ອຄ 1 ສະບັບ
4. ຫ້ອງວ່າການລັດຖະບານ (ກົມສັງລວມເສດຖະກິດ) 1 ສະບັບ.
5. ທະນາຄານແຫ່ງ ສປປ ລາວ (ກົມນະໂຍບາຍເງິນຕາ) 1 ສະບັບ.
6. ກະຊວງແຜນການ ແລະ ການລົງທຶນ (ສູນສະຖິຕິແຫ່ງຊາດ) 1 ສະບັບ.
7. ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (ພະແນກການຄ້າ-ການລົງທຶນ) 1 ສະບັບ.
8. ບັນດາແຂວງໃນຂອບເຂດທົ່ວປະເທດແຂວງລະ 1 ສະບັບ.
9. ສຳເນົາເດີມ 1 ສະບັບ

ຮູບສະແດງ ການເໜັງຕີງຂອງລາຄາສະເລ່ຍສິນຄ້າປະເພດເຂົ້າໃນທົ່ວປະເທດ



## ຮູບສະແດງ ການເໜັງຕີງຂອງລາຄາສະເລ່ຍສິນຄ້າປະເພດຊີ້ນໃນທົ່ວປະເທດ



## ຮູບສະແດງ ການເໜັງຕີງຂອງລາຄາສະເລ່ຍສິນຄ້າປະເພດສັດປີກໃນທົ່ວປະເທດ



## ຮູບສະແດງ ການເໜັງຕີງຂອງລາຄາສະເລ່ຍສິນຄ້າປະເພດນໍ້າມັນເຊື້ອໄຟ ໃນທົ່ວປະເທດ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມການຄ້າພາຍໃນ

ພະແນກ ວິໄຈພະຍາກອນ ຕະຫຼາດສິນຄ້າ-ລາຄາ

ເລກທີ: 0034 /ວຈພ

ນະຄອນຫຼວງວຽງຈັນ, ວັນທີ: 18.02.2015

ລາຄາສິນຄ້າຕົ້ນຕໍໃນທ້ອງຕະຫຼາດປະຈຳເດືອນ ມັງກອນ (01) ປີ 2015

| ລ/ດ | ລາຍການສິນຄ້າ | ຫົວໜ່ວຍ | ບໍລິຄຳໄຊ | ຜິດດ່ຽງ | ຜົ້ງສາລີ | ຜິດດ່ຽງ | ຫຼວງນ້ຳທາ | ຜິດດ່ຽງ | ອຸດົມໄຊ | ຜິດດ່ຽງ | ບໍ່ແກ້ວ | ຜິດດ່ຽງ | ຫຼວງພະບາງ | ຜິດດ່ຽງ | ຫົວພັນ | ຜິດດ່ຽງ | ໄຊຍະບຸລີ | ຜິດດ່ຽງ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ |
| I | ປະເພດສະບຽງອາຫານ | | | | | | | | | | | | | | | | | |
| 1 | ເຂົ້າເປືອກໜຽວ | ກີບ/ກິໂລ | 2,975 | - | 3,300 | - | 3,000 | - | 3,000 | - | 2,750 | 250 | 3,000 | - | 3,500 | - | 3,500 | - |
| 2 | ເຂົ້າເປືອກຈ້າວ | ກີບ/ກິໂລ | 3,525 | - | 3,300 | - | 3,500 | - | 3,000 | - | 2,200 | - | 3,000 | - | 3,300 | - | 4,000 | - |
| 3 | ເຂົ້າສານໜຽວລາວທີ 1 | ກີບ/ກິໂລ | 8,000 | - | 7,000 | - | 9,000 | - | 6,000 | - | 8,000 | - | 7,000 | - | 7,000 | - | 6,500 | - |
| 4 | ເຂົ້າສານໜຽວລາວທີ 2 | ກີບ/ກິໂລ | 6,625 | - | 6,500 | - | 8,000 | - | 5,500 | - | 7,000 | - | 6,000 | - | 6,000 | - | 5,500 | - |
| 5 | ເຂົ້າສານຈ້າວລາວທີ 1 | ກີບ/ກິໂລ | 9,250 | - | 7,000 | - | 6,500 | - | 6,000 | - | 7,500 | - | 7,000 | - | 7,000 | - | 7,500 | - |
| 6 | ເຂົ້າສານຈ້າວລາວທີ 2 | ກີບ/ກິໂລ | 7,250 | - | 5,500 | - | 6,000 | - | 5,500 | - | 6,500 | - | 5,000 | - | - | - | 6,000 | - |
| 7 | ເຂົ້າຈ້າວມະລິລາວ | ກີບ/ກິໂລ | 10,000 | - | 12,000 | - | 8,000 | - | 8,000 | - | 10,000 | - | 7,500 | - | - | - | 7,500 | - |
| 8 | ເຂົ້າຈ້າວມະລິໄທ | ກີບ/ກິໂລ | 11,750 | - | 13,000 | - | 11,000 | - | 13,000 | - | 11,500 | - | 13,000 | - | 13,000 | - | 13,000 | - |
| 9 | ຊີ້ນງົວປະເພດ 1 ຊີ້ນກ້ອນລິດ | ກີບ/ກິໂລ | 73,750 | - | 60,000 | - | 60,000 | - | 65,000 | 5,000 | 60,000 | - | 70,000 | - | 60,000 | - | 60,000 | - |
| 10 | ຊີ້ນງົວປະເພດ 2 ຊີ້ນລວມ | ກີບ/ກິໂລ | 64,500 | - | 55,000 | - | 50,000 | - | 65,000 | 5,000 | 50,000 | - | 65,000 | - | 50,000 | - | 55,000 | - |
| 11 | ຊີ້ນຄວາຍປະເພດ 1 ຊີ້ນກ້ອນລິດ | ກີບ/ກິໂລ | 73,750 | - | 60,000 | - | 60,000 | - | 65,000 | 5,000 | 60,000 | - | 70,000 | - | 60,000 | - | 60,000 | - |
| 12 | ຊີ້ນຄວາຍປະເພດ 2 ຊີ້ນລວມ | ກີບ/ກິໂລ | 64,500 | - | 55,000 | - | 50,000 | - | 65,000 | 5,000 | 50,000 | - | 65,000 | - | 50,000 | - | 55,000 | - |
| 13 | ຊີ້ນໝູປະເພດ 1 ຊີ້ນກ້ອນລິດ | ກີບ/ກິໂລ | 38,250 | - | 40,000 | - | 40,000 | - | 40,000 | - | 35,000 | - | 40,000 | - | 35,000 | 5,000 | 35,000 | - |
| 14 | ຊີ້ນໝູປະເພດ 2 ຊີ້ນ 3 ຊັ້ນ | ກີບ/ກິໂລ | 35,250 | - | 35,000 | - | 35,000 | - | 35,000 | - | 30,000 | - | 35,000 | - | 30,000 | - | 33,000 | - |
| 15 | ໄກ່ລາດຄົວແລ້ວ 1 ກິໂລ | ກີບ/ກິໂລ | 44,000 | - | 55,000 | - | 60,000 | - | 60,000 | - | 40,000 | - | 55,000 | - | 65,000 | - | 55,000 | - |
| 16 | ໄກ່ພັນຄົວແລ້ວ 1 ກິໂລ | ກີບ/ກິໂລ | 31,750 | - | 32,000 | - | 40,000 | - | 40,000 | - | 30,000 | - | 45,000 | - | 25,000 | - | 55,000 | - |
| 17 | ເປັດຄົວແລ້ວ 1 ກິໂລ | ກີບ/ກິໂລ | 35,000 | - | 32,000 | - | 40,000 | - | 65,000 | - | 40,000 | - | 60,000 | - | 65,000 | - | 60,000 | - |
| 18 | ໄຂ່ໄກ່ເບີ 1 | ກີບ/ໜ່ວຍ | 1,000 | - | 1,000 | - | 1,000 | - | 1,000 | - | 1,000 | - | 1,000 | - | 1,000 | - | 900 | - |
| 19 | ປາຄໍ່ | ກີບ/ກິໂລ | 60,000 | - | 75,000 | - | 35,000 | - | 35,000 | - | - | - | - | - | - | - | 25,000 | - |
| 20 | ປາດຸກພັນ | ກີບ/ກິໂລ | 18,000 | - | 22,000 | - | 35,000 | - | 20,000 | - | 20,000 | - | 22,000 | - | 20,000 | - | [illegible] | - |
| 21 | ປານິນ | ກີບ/ກິໂລ | 22,000 | - | 24,000 | - | 22,000 | - | 22,000 | - | 22,000 | - | 25,000 | - | 30,000 | - | 25,000 | - |
| 22 | ໝາກເຜັດແຫ້ງ | ກີບ/ກິໂລ | 20,000 | - | 40,000 | - | 43,750 | - | 28,000 | - | 25,000 | - | 23,000 | - | 25,000 | - | 25,000 | - |
| 23 | ໝາກເຜັດສົດ | ກີບ/ກິໂລ | 10,000 | - | 10,000 | - | 11,500 | - | 12,000 | - | 25,000 | - | 25,000 | - | 30,000 | - | 20,000 | - |

| ລ/ດ | ລາຍການສິນຄ້າ | ຫົວໜ່ວຍ | ນຄຫຼວງ | ຜິດດ່ຽງ | ຜົ້ງສາລີ | ຜິດດ່ຽງ | ຫຼວງນ້ຳທາ | ຜິດດ່ຽງ | ອຸດົມໄຊ | ຜິດດ່ຽງ | ບໍ່ແກ້ວ | ຜິດດ່ຽງ | ຫຼວງພະບາງ | ຜິດດ່ຽງ | ຫົວພັນ | ຜິດດ່ຽງ | ໄຊຍະບູລີ | ຜິດດ່ຽງ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ |
| 24 | ຫົວຜັກບົ່ວແຫ້ງ | ກີບ/ກິໂລ | 9,000 | - | 16,000 | - | 10,000 | - | 10,000 | - | 15,000 | - | 13,000 | - | 12,000 | - | 14,000 | - |
| 25 | ຫົວຜັກທຽມແຫ້ງ | ກີບ/ກິໂລ | 9,000 | - | 15,000 | - | 10,000 | - | 10,000 | - | 12,000 | - | 10,000 | - | 12,000 | - | 18,000 | - |
| 26 | ນ້ຳຕານຊາຍແດງ | ກີບ/ກິໂລ | 9,000 | - | 10,000 | - | 8,000 | - | 7,000 | - | 8,000 | - | 8,500 | - | 8,000 | - | - | - |
| 27 | ນ້ຳຕານຊາຍຂາວ | ກີບ/ກິໂລ | 9,000 | - | 10,000 | - | 8,000 | - | 7,000 | - | 8,000 | - | 8,500 | - | 8,000 | - | 7,000 | - |
| 28 | ນົມປ໋ອງ ກາມະລິ | ກີບ/ປອງ | 7,000 | - | 7,000 | - | 8,000 | - | 7,500 | - | 8,000 | - | 6,500 | - | 7,000 | - | 7,000 | - |
| 29 | ນົມປ໋ອງ ກາໝີ | ກີບ/ປອງ | 5,000 | - | 7,000 | - | 8,000 | - | 6,000 | - | 7,000 | - | 5,500 | - | 6,000 | - | 7,000 | - |
| 30 | ນ້ຳປາລາວ | ກີບ/ແກ້ວ | 4,000 | - | - | - | 8,000 | - | 2,500 | - | - | - | 4,000 | - | - | - | - | - |
| 31 | ນ້ຳປາໄທ ກາປາມຶກ | ກີບ/ແກ້ວ | 7,000 | - | 9,000 | - | 8,000 | - | 7,000 | - | 9,000 | - | 7,000 | - | 8,000 | - | 8,000 | - |
| 32 | ນ້ຳສະອິ້ວລາວ | ກີບ/ແກ້ວ | 5,000 | - | - | - | 8,000 | - | 3,000 | - | - | - | 4,000 | - | 10,000 | - | 6,000 | - |
| 33 | ນ້ຳສະອິ້ວໄທ ກາພູເຂົາທອງ | ກີບ/ແກ້ວ | 9,000 | - | 10,000 | - | 8,000 | - | 7,000 | - | 10,000 | - | 11,000 | - | 5,000 | - | 10,000 | - |
| 34 | ແປ້ງນົວໄທກາຈອງ ຖົງ 0.5 ກິໂລ | ກີບ/ຖົງ | 11,000 | - | 6,000 | - | 12,000 | - | 6,000 | - | 6,000 | - | 12,000 | - | 12,000 | - | 11,000 | - |
| 35 | ນ້ຳມັນພືດຈາກເນື້ອປາມ ແກ້ວ 1 ລິດ | ກີບ/ແກ້ວ | 15,000 | - | 15,000 | - | 13,000 | - | 11,000 | - | 15,000 | - | 14,000 | - | 5,000 | - | - | - |
| 36 | ນ້ຳມັນພືດຈາກເນື້ອຖົ່ວເຫຼືອງ (ກາກຸກ) ແກ້ວ 1 ລິດ | ກີບ/ແກ້ວ | 17,000 | - | 18,000 | - | 15,000 | - | 16,000 | - | 18,000 | - | 18,000 | - | 18,000 | - | 17,000 | - |
| 37 | ນ້ຳມັນພືດຈາກຣຳເຂົ້າ (ກາຊິມ) ແກ້ວ 1 ລິດ | ກີບ/ແກ້ວ | 17,000 | - | 15,000 | - | - | - | - | - | - | - | 18,000 | - | 17,000 | - | - | - |
| 38 | ເບຍລາວແກ້ວໃຫຍ່ | ກີບ/ແກ້ວ | 8,000 | - | 10,000 | - | 9,000 | - | 8,000 | - | 8,000 | - | 8,000 | - | 10,000 | - | 8,500 | - |
| 39 | ນ້ຳຫວານລາວແກ້ວນ້ອຍ | ກີບ/ແກ້ວ | 3,000 | - | 8,000 | - | 3,000 | - | 5,000 | - | - | - | 4,000 | - | 6,000 | - | 3,000 | - |
| II | ປະເພດເຄື່ອງກໍ່ສ້າງ | | | | | | | | | | | | | | | | | |
| 40 | ຊີມັງລາວປະສົມ ກະທິງຟ້າ P425 | ກີບ/ໂຕນ | 787,500 | - | - | - | - | - | 780,000 | - | - | - | 830,000 | - | - | - | - | - |
| 41 | ຊີມັງລາວປອດແລນ ກະທິງແດງ P525 | ກີບ/ໂຕນ | 825,500 | - | - | - | - | - | 760,000 | - - | - | - | 850,000 | - | - | - | - | - |
| 42 | ຊີມັງລາວປະສົມ ກາກະທິງຂຽວ P425 | ກີບ/ໂຕນ | 743,333 | - | - | - | - | - | 750,000 | - | - | - | 850,000 | - | - | - | - | - |
| 3 | ຊີມັງລາວປະສົມ ກາກະທິງແດງ P425 | ກີບ/ໂຕນ | - | - | - | - | - | - | 770,000 | - | - | - | 880,000 | - | - | - | - | - |
| 4 | ຊີມັງລາວປະສົມ ກະທິງກລາງຫົາ P42.5 | ກີບ/ໂຕນ | - | - | - | - | - | - | - | - | - | - | - | - | - | - | - | - |
| 5 | ຊີມັງລາວປອດແລນ ກະທິງທອງແດງ P/L 1.ASTM | ກີບ/ໂຕນ | - | - | - | - | - | - | - | - | - | - | - | - | - | - | - | - |
| 6 | ຊີມັງໄທປະສົມ ການົກ | ກີບ/ໂຕນ | - | - | - | - | - | - | 980,000 | - | - | - | - | - | - | - | 950,000 | |
| | ຊີມັງໄທປະສົມ ກາເສືອ | ກີບ/ໂຕນ | - | - | - | - | 860,000 | - | - | - | 750,000 | - | 980,000 | - | - | - | 980,000 | |
| | ຊີມັງໄທປະສົມ TPI ຂຽວ | ກີບ/ໂຕນ | - | - | - | - | - | - | 940,000 | - | - | - | - | - | - | - | | |
| | ຊີມັງໄທປອດແລນ ກາຊ້າງ | ກີບ/ໂຕນ | - | - | - | - | 860,000 | - | 980,000 | - | 750,000 | - | 980,000 | - | 850,000 | | 1,000,000 | |
| | ຊີມັງໄທປອດແລນ ກາໝັດ | ກີບ/ໂຕນ | - | - | - | - | - | - | - | - | - | - | - | - | - | | 1,000,000 | |
| | ຊີມັງໄທປອດແລນ TPI ແດງ | ກີບ/ໂຕນ | - | - | - | - | - | - | - | - | - | - | - | - | - | | | |
| | ຊີມັງໄທປອດແລນ P525 | ກີບ/ໂຕນ | - | - | - | - | 860,000 | - | - | - | - | - | - | - | - | | | |
| | ຊີມັງຫວຽດນາມປອດແລນ | ກີບ/ໂຕນ | - | - | 840,000 | - | - | - | 800,000 | - | - | - | - | - | 840,000 | | | |

| ລ/ດ | ລາຍການສິນຄ້າ | ຫົວໜ່ວຍ | ນະຄອນຫຼວງ | ຜົນຕ່າງ | ຜົ້ງສາລີ | ຜົນຕ່າງ | ຫຼວງນ້ຳທາ | ຜົນຕ່າງ | ອຸດົມໄຊ | ຜົນຕ່າງ | ບໍ່ແກ້ວ | ຜົນຕ່າງ | ຫຼວງພະບາງ | ຜົນຕ່າງ | ຫົວພັນ | ຜົນຕ່າງ | ໄຊຍະບູລີ | ຜົນຕ່າງ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ |
| ກ. | ເຫຼັກເສັ້ນລາວ (ປະເພດ 1 ເຫຼັກຊຽງຄວນ) | | | | | | | | | | | | | | | | | |
| 54 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ10 ຍາວ10ມ/ເສັ້ນ, 162 ເສັ້ນ/ຕ | ກີບ/ໂຕນ | 7,633,333 | - | - | - | - | - | 6,200,000 | - | - | - | 7,500,000 | - | - | - | 6,500,000 | |
| 55 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ12 ຍາວ10ມ/ເສັ້ນ, 112 ເສັ້ນ/ຕ | ກີບ/ໂຕນ | 7,650,000 | - | - | - | - | - | 6,200,000 | - | - | - | 7,500,000 | - | - | - | 9,720,000 | - |
| 56 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ14 ຍາວ10ມ/ເສັ້ນ, 82 ເສັ້ນ/ຕ | ກີບ/ໂຕນ | 7,200,000 | - | - | - | - | - | 6,200,000 | - | - | - | 7,200,000 | - | - | - | - | - |
| ຂ. | ເຫຼັກເສັ້ນລາວ (ປະເພດ 2 ໂຮງງານປາກຊັນ) | | | | | | | | | | | | | | | | | |
| 57 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ10 ຍາວ10ມ/ເສັ້ນ, 162ເສັ້ນ/ຕ | ກີບ/ໂຕນ | 5,225,000 | - | - | - | - | - | 6,200,000 | - | - | - | - | - | - | - | - | - |
| 58 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ12 ຍາວ10ມ/ເສັ້ນ, 112ເສັ້ນ/ຕ | ກີບ/ໂຕນ | 5,441,750 | - | - | - | - | - | 6,200,000 | - | - | - | - | - | - | - | 7,504,000 | - |
| 59 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ14 ຍາວ10ມ/ເສັ້ນ, 82ເສັ້ນ/ຕ | ກີບ/ໂຕນ | 5,500,000 | - | - | - | - | - | 6,200,000 | - | - | - | - | - | - | - | - | - |
| ຄ. | ເຫຼັກເສັ້ນລາວ (ປະເພດ 1 ເຫຼັກທີ່ຜະລິດໄດ້ຂອງຕ່າງແຂວງ) | | | | | | | | | | | | | | | | | |
| 60 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ10 ຍາວ10ມ/ເສັ້ນ, 162ເສັ້ນ/ຕ | ກີບ/ໂຕນ | - | - | 5,670,000 | - | - | - | - | - | - | - | - | - | - | - | 7,776,000 | - |
| 61 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ12 ຍາວ10ມ/ເສັ້ນ, 112ເສັ້ນ/ຕ | ກີບ/ໂຕນ | - | - | 5,040,000 | - | - | - | - | - | - | - | - | - | - | - | - | - |
| 62 | ເຫຼັກເສັ້ນປ່ອງອ້ອຍລາວ ຟີ14 ຍາວ10ມ/ເສັ້ນ, 82ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | - | - | - | - | - | - | - | - |
| ງ. | ເຫຼັກເສັ້ນໄທ | | | | | | | | | | | | | | | | | |
| 63 | ເຫຼັກເສັ້ນກົມກ້ຽງໄທ ຟີ6 ຍາວ10ມ/ເສັ້ນ, 450ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | 5,396,000 | - | - | - | - | - | - | - |
| 64 | ເຫຼັກເສັ້ນກົມກ້ຽງໄທ ຟີ8 ຍາວ10ມ/ເສັ້ນ, 253ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | 5,819,000 | - | - | - | - | - | - | - |
| 65 | ເຫຼັກເສັ້ນປ່ອງອ້ອຍໄທ ຟີ10 ຍາວ10ມ/ເສັ້ນ, 162ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | 4,200,000 | - | - | - | - | - | 7,776,000 | - |
| 66 | ເຫຼັກເສັ້ນປ່ອງອ້ອຍໄທ ຟີ12 ຍາວ10ມ/ເສັ້ນ, 112ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | 7,000,000 | - | - | - | - | - | 7,504,000 | - |
| 67 | ເຫຼັກເສັ້ນປ່ອງອ້ອຍໄທ ຟີ14 ຍາວ10ມ/ເສັ້ນ, 82ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | 6,970,000 | - | - | - | - | - | 8,100,000 | - |
| ຈ. | ເຫຼັກເສັ້ນຫວຽດນາມ | | | | | | | | | | | | | | | | | |
| 68 | ເຫຼັກເສັ້ນກົມກ້ຽງຫວຽດນາມ ຟີ6 ຍາວ10ມ/ເສັ້ນ, 450ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | - | - | 6,500,000 | - | 8,500,000 | - | - | - |
| 69 | ເຫຼັກເສັ້ນກົມກ້ຽງຫວຽດນາມ ຟີ8 ຍາວ10ມ/ເສັ້ນ, 253ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | - | - | 6,500,000 | - | 8,500,000 | - | 7,500,000 | - |
| 70 | ເຫຼັກເສັ້ນປ່ອງອ້ອຍຫວຽດນາມ ຟີ10 ຍາວ10ມ/ເສັ້ນ, 162ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | - | - | - | - | 6,800,000 | - | 8,500,000 | - | - | - |
| 71 | ເຫຼັກເສັ້ນປ່ອງອ້ອຍຫວຽດນາມ ຟີ12 ຍາວ10ມ/ເສັ້ນ, 112ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | 6,300,000 | - | - | - | 6,800,000 | - | 8,500,000 | - | - | - |
| 72 | ເຫຼັກເສັ້ນປ່ອງອ້ອຍຫວຽດນາມ ຟີ14 ຍາວ10ມ/ເສັ້ນ, 82ເສັ້ນ/ຕ | ກີບ/ໂຕນ | - | - | - | - | - | - | 6,300,000 | - | - | - | 6,800,000 | - | 8,500,000 | - | - | - |
| 73 | ກະເບື້ອງມຸງຫຼັງຄາສີຂອງລາວ (120X60X0.5) ຊມ | ກີບ/ແຜ່ນ | 13,000 | - | 26,000 | - | 13,000 | - | 12,000 | - | - | - | - | - | 15,000 | - | | - |
| 74 | ກະເບື້ອງມຸງຫຼັງຄາສີຂາວຂອງລາວ (120X60X0.5) ຊມ | ກີບ/ແຜ່ນ | 16,000 | - | - | - | 14,000 | - | 12,000 | - | - | - | 10,000 | - | - | - | | - |
| 75 | ກະເບື້ອງມຸງຫຼັງຄາສີຂອງໄທ (120X60X0.5) ຊມ | ກີບ/ແຜ່ນ | 16,000 | - | 26,000 | - | 22,000 | - | 14,000 | - | 18,500 | - | 13,000 | - | 24,000 | - | | - |
| 76 | ກະເບື້ອງມຸງຫຼັງຄາສີຂາວຂອງໄທ (120X60X0.5) ຊມ | ກີບ/ແຜ່ນ | 17,000 | - | 38,000 | - | 13,000 | - | 14,000 | - | 11,300 | - | 22,000 | - | - | - | | - |
| 77 | ສັງກະສີລາວ ເຄືອບຂາວ | ກີບ/ແຜ່ນ | 28,000 | - | 38,000 | - | 24,000 | - | 27,000 | - | - | - | 35,000 | - | 30,000 | - | | - |
| 78 | ສັງກະສີໄທ ເຄືອບຂາວ | ກີບ/ແຜ່ນ | 26,000 | - | 43,000 | - | 25,000 | - | 38,000 | - | 43,000 | - | 38,000 | - | 35,000 | - | 36,000 | - |
| 79 | ນ້ຳສີທາຍໃນ U90 ຂອງລາວ ຖັງ 18 ລິດ | ກີບ/ຖັງ | 125,000 | - | 190,000 | - | 160,000 | - | 150,000 | - | 140,000 | - | 125,000 | - | 250,000 | - | 250,000 | - |

| ລ/ດ | ລາຍການສິນຄ້າ | ຫົວໜ່ວຍ | ນຄຫຼວງ | ຜົນຕ່າງ | ຜົ້ງສາລີ | ຜົນຕ່າງ | ຫຼວງນ້ຳທາ | ຜົນຕ່າງ | ອຸດົມໄຊ | ຜົນຕ່າງ | ບໍ່ແກ້ວ | ຜົນຕ່າງ | ຫຼວງພະບາງ | ຜົນຕ່າງ | ຫົວພັນ | ຜົນຕ່າງ | ໄຊຍະບູລີ | ຜົນຕ່າງ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ | Jan-15 | ກີບ |
| 80 | ນ້ຳສີທາຍນອກ U90 ຂອງລາວ ຖັງ 18 ລິດ | ກີບ/ຖັງ | 170,000 | - | 230,000 | - | 220,000 | - | 195,000 | - | 163,000 | - | 175,000 | - | 220,000 | - | 250,000 | - |
| 81 | ນ້ຳສີທາຍໃນ ATM ຂອງລາວ ຖັງ 18 ລິດ | ກີບ/ຖັງ | 110,000 | - | 350,000 | - | 170,000 | - | 130,000 | - | 138,000 | - | 130,000 | - | 180,000 | - | 170,000 | - |
| 82 | ນ້ຳສີທາຍນອກ ATM ຂອງລາວ ຖັງ 18 ລິດ | ກີບ/ຖັງ | 150,000 | - | 350,000 | - | 220,000 | - | 165,000 | - | 162,500 | - | 170,000 | - | 180,000 | - | 160,000 | - |
| 83 | ນ້ຳສີທາຍໃນ TOA ຂອງໄທ ຖັງ 18 ລິດ | ກີບ/ຖັງ | - | - | - | - | 170,000 | - | 140,000 | - | 140,000 | - | 360,000 | - | 160,000 | - | 230,000 | - |
| 84 | ນ້ຳສີທາຍນອກ TOA ຂອງໄທ ຖັງ 18 ລິດ | ກີບ/ຖັງ | - | - | - | - | 220,000 | - | 170,000 | - | 140,000 | - | 400,000 | - | 185,000 | - | 500,000 | - |
| III. | ເຄື່ອງໃຊ້ການສຶກສາ | | | | | | | | | | | | | | | | | |
| 85 | ປຶ້ມຂຽນຂະໜາດ 100 ໜ້າ | ກີບ/ຫົວ | 2,500 | - | 1,000 | - | 2,000 | - | 1,000 | - | 2,500 | - | 2,000 | - | 1,000 | - | 1,500 | - |
| 86 | ບິກຂຽນ ກາມ້າ | ກີບ/ກັບ | 2,000 | - | 1,000 | - | 1,000 | - | 1,000 | - | 2,000 | - | 2,000 | - | 1,500 | - | 1,500 | - |
| IV. | ຝຸ່ນວິທະຍາສາດ | | | | | | | | | | | | | | | | | |
| 87 | ປຸຍສູດ 16-20-00 ຖົງ 50 ກິໂລ | ກີບ/ຖົງ | 233,250 | - | 250,000 | - | 300,000 | - | 300,000 | - | 195,000 | - | 280,000 | - | - | - | 300,000 | - |
| 88 | ປຸຍສູດ 46-00-00 ຖົງ 50 ກິໂລ | ກີບ/ຖົງ | 239,500 | - | 150,000 | - | 320,000 | - | 300,000 | - | 225,000 | - | 285,000 | - | 260,000 | - | 300,000 | - |
| 89 | ປຸຍສູດ 15-15-15 ຖົງ 50 ກິໂລ | ກີບ/ຖົງ | 261,250 | - | 150,000 | - | 310,000 | - | 300,000 | - | 250,000 | - | 290,000 | - | - | - | 300,000 | - |
| V | ຫົວອາຫານສັດລ້ຽງ | | | | | | | | | | | | | | | | | |
| ກ. | ຫົວອາຫານສັດ (ລາວ) | | | | | | | | | | | | | | | | | |
| 90 | 105 M ໄກ່ພັນໃຂ່ 18 ອາທິດຂຶ້ນໄປ. ຖົງ 50 ກິໂລ | ກີບ/ຖົງ | 90,000 | - | - | - | - | - | - | - | - | - | 153,000 | - | 170,000 | - | 165,000 | - |
| 91 | 201 C ໄກ່ພັນເນື້ອນ້ອຍ 1-21 ມື້. ຖົງ 50 ກິໂລ | ກີບ/ຖົງ | 120,000 | - | - | - | - | - | - | - | - | - | 150,000 | - | - | - | 160,000 | - |
| 92 | 202 P ໄກ່ພັນເນື້ອໃຫຍ່ 21 ມື້. ຖົງ 30 ກິໂລ | ກີບ/ຖົງ | 115,000 | - | - | - | - | - | - | - | - | - | 165,000 | - | 170,000 | - | - | - |
| 93 | 302 M/P ອາຫານໝູນ້ອຍເກີດໃໝ່ 15-30 ກິໂລ. ຖົງ 50 ກິໂລ | ກີບ/ຖົງ | 130,000 | - | - | - | - | - | - | - | - | - | 210,000 | - | - | - | 160,000 | - |
| 94 | 305 M/P ອາຫານໝູຂຸນໃຫຍ່ຂາຍ. ຖົງ 50 ກິໂລ | ກີບ/ຖົງ | 115,000 | - | - | - | - | - | - | - | - | - | 150,000 | - | - | - | - | - |
| 95 | 805 M ເຂັ້ມຂຸ້ນໝູລວມ. ຖົງ 50 ກິໂລ | ກີບ/ຖົງ | - | - | - | - | - | - | - | - | - | - | 155,000 | - | - | - | - | - |
| ຂ. | ຫົວອາຫານສັດ (ໄທ) | | | | | | | | | | | | | | | | | |
| 96 | 440 ໄກ່ນ້ອຍໄທ. ຖົງ 30 ກິໂລ | ກີບ/ຖົງ | 123,500 | - | - | - | 160,000 | - | 165,000 | - | 150,000 | - | 150,000 | - | 170,000 | - | - | - |
| 97 | 441 ໄກ່ໃຫຍ່ໄທ. ຖົງ 30 ກິໂລ | ກີບ/ຖົງ | 146,500 | - | - | - | 160,000 | - | 165,000 | - | 150,000 | - | 150,000 | - | - | - | - | |
| 98 | 240 ໝູນ້ອຍໄທ. ຖົງ 30 ກິໂລ | ກີບ/ຖົງ | 175,000 | - | - | - | 210,000 | - | 210,000 | - | 200,000 | - | 210,000 | - | - | - | 150,000 | |
| 99 | 241 ໝູຂຸນໄທ. ຖົງ 30 ກິໂລ | ກີບ/ຖົງ | 142,000 | - | - | - | 160,000 | - | - | - | 162,000 | - | 160,000 | - | - | - | 150,000 | |
| 100 | 242 ໝູກາງໄທ. ຖົງ 30 ກິໂລ | ກີບ/ຖົງ | 138,500 | - | - | - | 160,000 | - | - | - | 200,000 | - | 155,000 | - | - | - | 150,000 | |
| 101 | 243 ໝູໃຫຍ່ໄທ. ຖົງ 30 ກິໂລ | ກີບ/ຖົງ | 133,000 | - | - | - | 210,000 | - | - | - | 150,000 | - | 150,000 | - | - | | 150,000 | |
| 102 | CP 9931 ປານ້ອຍໄທ. ຖົງ 25 ກິໂລ | ກີບ/ຖົງ | 132,500 | - | - | - | 130,000 | - | 130,000 | - | 150,000 | - | 175,000 | - | 170,000 | | | |
| 103 | CP 9932 ປາໃຫຍ່ໄທ. ຖົງ 25 ກິໂລ | ກີບ/ຖົງ | 122,500 | - | - | - | 120,000 | - | 125,000 | - | 150,000 | - | 168,000 | - | - | | | |
